ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ຄະນະສະເພາະກິດເພື່ອປ້ອງກັນ, ຄວບຄຸມ
ແລະແກ້ໄຂການລະບາດຂອງພະຍາດ COVID-19

ເລກທີ...031.../ສພກ
ນະຄອນຫຼວງວຽງຈັນ, ວັນທີ 21 ເມສາ 2020

# ຄຳແນະນຳ
## ກ່ຽວກັບເງື່ອນໄຂ ແລະ ມາດຕະການ ສຳລັບພາກທຸລະກິດ ທີ່ສາມາດດຳເນີນກິດຈະການໃນໄລຍະທີ່ມີການລະບາດຂອງພະຍາດ COVID-19

- ອີງຕາມ ຄຳສັ່ງຂອງທ່ານນາຍົກລັດຖະມົນຕີ ສະບັບເລກທີ 06/ນຍ, ລົງວັນທີ 29 ມີນາ 2020 ວ່າດ້ວຍການເພີ່ມທະວີ ມາດຕະການສະກັດກັ້ນ, ກັນການລະບາດ, ຄວບຄຸມ ແລະ ກຽມຄວາມພ້ອມຮອບດ້ານເພື່ອຕ້ານພະຍາດ COVID-19;
- ອີງຕາມ ການແຈ້ງການຂອງຫ້ອງການສຳນັກງານນາຍົກລັດຖະມົນຕີ ສະບັບເລກທີ 481/ຫສນຍ, ລົງວັນທີ 15 ເມສາ 2020 ວ່າດ້ວຍການຕໍ່ເວລາ ແລະ ການແນະນຳເພີ່ມເຕີມກ່ຽວກັບການຈັດຕັ້ງປະຕິບັດຄຳສັ່ງຂອງທ່ານນາຍົກລັດຖະມົນຕີ ສະບັບເລກທີ 06/ນຍ, ລົງວັນທີ 29 ມີນາ 2020.

ເພື່ອເປັນການຫຼຸດຜ່ອນຜົນກະທົບຕໍ່ເສດຖະກິດຂອງລາວ ຈາກການຕໍ່ເວລາ ການຈັດຕັ້ງປະຕິບັດຄຳສັ່ງ ສະບັບເລກທີ 06/ນຍ ແຕ່ຕ້ອງບົນພື້ນຖານຮັບປະກັນບໍ່ໃຫ້ມີຄວາມສ່ຽງໃນການຕິດເຊື້ອພະຍາດ COVID-19.

**ຄະນະສະເພາະກິດ ເພື່ອປ້ອງກັນ, ຄວບຄຸມ ແລະ ແກ້ໄຂການລະບາດຂອງພະຍາດ COVID-19 ກຳນົດເງື່ອນໄຂ ແລະ ມາດຕະການ ດັ່ງນີ້:**

## I. ເງື່ອນໄຂທີ່ຕ້ອງປະຕິບັດສຳລັບພາກທຸລະກິດ ທີ່ຈະເປີດດຳເນີນກິດຈະການ ມີດັ່ງນີ້:

1) ມີພື້ນທີ່ເຮັດວຽກ ເປັນຂອບເຂດສະເພາະຂອງໂຄງການ, ບໍລິສັດ ແລະ ໂຮງງານ, ມີບ່ອນພັກເຊົາໃນຂອບເຂດສະເພາະ ໄດ້ມາດຕະຖານ ໃຫ້ພະນັກງານ-ກຳມະກອນ ຢ່າງພຽງພໍ,ສຳລັບກິດຈະການທີ່ມີແຮງງານຫຼາຍ ຫຼື ຄວາມສ່ຽງສູງໃນການລະບາດ, ມີສະຖານທີ່ແຍກປ່ຽວສຳລັບ ກໍລະນີສົງໄສພະຍາດ COVID-19 ພ້ອມທັງຕ້ອງມີລົດ ຮັບ-ສົ່ງຄົນເຈັບໃນເວລາສຸກເສີນ;
2) ມີສະຖານທີ່ເຮັດວຽກ ທີ່ບໍ່ແອອັດ ແລະ ຮັບປະກັນໄລຍະຫ່າງ 1 ແມັດຂຶ້ນໄປ;
3) ມີທີ່ພັກຂອງພະນັກງານ-ກຳມະກອນ ທີ່ບໍ່ແອອັດ ແລະ ບ່ອນນອນຫ່າງກັນຢ່າງໜ້ອຍ 1 ແມັດຂຶ້ນໄປ;
4) ມີຫ້ອງອາຫານທີ່ບໍ່ແອອັດ, ຮັບປະກັນຫຼັກການອະນາໄມ, ບໍ່ໃຫ້ໃຊ້ເຄື່ອງຮ່ວມກັນ ແລະ ເວລານັ່ງກິນອາຫານຕ້ອງມີໄລຍະຫ່າງ 1 ແມັດຂຶ້ນໄປ;
5) ມີລົດຮັບສົ່ງພະນັກງານ ແລະ ກຳມະກອນ ໂດຍຮັບປະກັນໄລຍະຫ່າງ 1 ແມັດຂຶ້ນໄປ ຖ້າວ່າທີ່ພັກຢູ່ຫ່າງຈາກບ່ອນເຮັດວຽກ;
6) ມີນ້ຳສະອາດເພື່ອນຳໃຊ້ຢ່າງພຽງພໍຕະຫຼອດ 24 ຊົ່ວໂມງ, ມີບ່ອນລ້າງມື, ສະໜອງສະບູລ້າງມື, ເຈວລ້າງມື, ຜ້າອັດປາກ-ດັງ ໃຫ້ພຽງພໍ ສຳລັບພະນັກງານ-ກຳມະກອນ ທຸກຄົນ ໃຫ້ຖືກຕາມຫຼັກການອະນາໄມ;

7) ມີເຈົ້າໜ້າທີ່ຮັກສາເວນຍາມ 24 ຊົ່ວໂມງ ໂດຍບໍ່ອະນຸຍາດໃຫ້ພະນັກງານ-ກຳມະກອນອອກໄປຂ້າງນອກ ໂດຍບໍ່ໄດ້ຮັບອະນຸຍາດ ແລະ ບໍ່ໃຫ້ບຸກຄົນຂ້າງນອກເຂົ້າມາ;

8) ມີໜ່ວຍງານອະນາໄມ ກຳຈັດຂີ້ເຫຍື້ອ ແລະ ສິ່ງເສດເຫຼືອທີ່ອາດສ່ຽງຕໍ່ການຕິດເຊື້ອພະຍາດ ຢ່າງຖືກວິທີ ເຊັ່ນ: ມີກະຕ່າຂີ້ເຫຍື້ອແບບມີຝາປິດ ປຸແຕ່ລະຈຸດ;

9) ມີການອຳນວຍຄວາມສະດວກໃຫ້ແກ່ທີມແພດ ເຂົ້າໄປຕິດຕາມກວດກາ ຫຼື ເຜີຍແຜ່ຄວາມຮູ້ ກ່ຽວກັບ ພະຍາດ COVID-19 ເປັນແຕ່ລະໄລຍະ ສຳລັບ ໂຄງການ, ບໍລິສັດ ແລະ ໂຮງງານ ຕ່າງໆ.

## II. <u>ມາດຕະການທີ່ຕ້ອງປະຕິບັດສຳລັບພາກທຸລະກິດ ທີ່ຈະດຳເນີນກິດຈະການ ມີດັ່ງນີ້:</u>

1) ຕ້ອງມີຈຸດກວດອຸນຫະພູມ ແລະ ສະໜອງເຈວລ້າງມື ໃຫ້ພະນັກງານ-ກຳມະກອນ ປະຕູທາງເຂົ້າ-ອອກ ບ່ອນເຮັດວຽກ, ທີ່ພັກ ແລະ ຫ້ອງອາຫານ ຕອນເຊົ້າ-ແລງໃນແຕ່ລະວັນ, ພ້ອມທັງ ບັນທຶກອາການຂອງແຕ່ລະຄົນໃສ່ແບບຟອມ ແລະ ຖ້າພົບເຫັນຜູ້ມີອາການໄຂ້ (ອຸນຫະພູມສູງກວ່າ 37.5 ອົງສາ) ຫຼື ໄອ ຫຼື ຫາຍໃຈຍາກ, ຕ້ອງໄດ້ສົ່ງເຂົ້າຫ້ອງແຍກປ່ຽວຂອງໂຄງການ, ບໍລິສັດ ແລະ ໂຮງງານ ທີ່ຈັດໄວ້ ຢ່າງຮີບດ່ວນ ແລ້ວໂທປຶກສາ ສາຍດ່ວນ 166, 165 ແລະ ພົວພັນໃຫ້ ແພດໜໍ່ ເຂົ້າກວດທັນທີ;

2) ຕ້ອງມີຜ້າອັດປາກ-ດັງ ສະໜອງໃຫ້ພະນັກງານ-ກຳມະກອນ ທຸກຄົນ ຕະຫຼອດໄລຍະເວລາເຮັດວຽກ ແລະ ເວລາຢູ່ຮ່ວມກັນ ໃນສະຖານທີ່ໃດໜຶ່ງ ແລະ ມີສະຖານທີ່ສຳລັບລ້າງມື ທີ່ສະດວກ;

3) ຕ້ອງຮັບປະກັນການຮັກສາໄລຍະຫ່າງ (ຢ່າງໜ້ອຍ 01 ແມັດຂຶ້ນໄປ) ສຳລັບ ພະນັກງານ-ກຳມະກອນ, ຫ້າມດຳເນີນ ກິດຈະກຳທີ່ບໍ່ສາມາດຮັກສາໄລຍະຫ່າງໄດ້ເຊັ່ນ: ກິລາ, ງານລ້ຽງ ລວມທັງການຊຸມນຸມ ຕ່າງໆ;

4) ຕ້ອງມີມາດຕະການກວດກາ ຄົນຂັບລົດຂົນສົ່ງສິນຄ້າ ຫຼື ຜູ້ມາພົວພັນວຽກຈາກພາຍນອກຢ່າງເຄັ່ງຄັດຕາມມາດຕະການທີ່ວາງອອກຄືກັນກັບ ພະນັກງານ-ກຳມະກອນຂອງຕົນ;

5) ຕ້ອງອະນາໄມ ສະຖານທີ່ເຮັດວຽກຂອງພະນັກງານ-ກຳມະກອນ, ຫ້ອງອາຫານ, ຫ້ອງນ້ຳ, ບ່ອນພັກ ແລະ ສາງບ່ອນທີ່ຮັບສົ່ງສິນຄ້າ ພາຍຫຼັງສິ້ນສຸດກິດຈະກຳ ທຸກໆມື້ ສຳລັບ ໂຄງການ, ບໍລິສັດ ແລະ ໂຮງງານ;

6) ໃຫ້ໂຈະການຮັບເອົາຊ່ຽວຊານ, ພະນັກງານ ແລະ ກຳມະກອນໃໝ່ຈາກຕ່າງປະເທດ ແລະ ພາຍໃນຊົ່ວຄາວ ຈົນກວ່າສະພາບການລະບາດຂອງພະຍາດສາມາດຄວບຄຸມໄດ້.

## III. <u>ການຈັດຕັ້ງປະຕິບັດ:</u>

1. ໂຄງການ, ບໍລິສັດ ແລະ ໂຮງງານ ໃດທີ່ມີຄົບຕາມ 9 ເງື່ອນໄຂ ແລະ ສາມາດປະຕິບັດຕາມ 6 ມາດຕະການ ທີ່ກ່າວມາຂ້າງເທິງນັ້ນ ຫຼັງຈາກໄດ້ຜ່ານການກວດກາ ແລະ ຮັບຮອງຈາກໜ່ວຍງານກ່ຽວຂ້ອງ ຂອງຄະນະສະເພາະກິດແລ້ວ ຈະຕ້ອງໄດ້ເຮັດສັນຍາ ຫຼື ບົດບັນທຶກກັບຄະນະສະເພາະກິດ ຫຼື ພາກສ່ວນອື່ນທີ່ໄດ້ຮັບອະນຸຍາດ. ໃຫ້ໂຄງການ, ບໍລິສັດ, ແລະ ໂຮງງານ ຮັບຜິດຊອບທັງໝົດຕໍ່ເຫດການລະບາດຂອງພະຍາດ COVID-19 ແລະ ການໃຊ້ຈ່າຍຕ່າງໆ ທີ່ອາດຈະເກີດຂຶ້ນຢູ່ໃນຂອບເຂດກິດຈະການຂອງຕົນແຕ່ພຽງຜູ້ດຽວ;
2. ຖ້າຫາກໂຄງການ, ບໍລິສັດ ແລະ ໂຮງງານ ທີ່ໄດ້ຮັບອະນຸຍາດດຳເນີນກິດຈະການ ບໍ່ປະຕິບັດຕາມມາດຕະການທີ່ໄດ້ກຳນົດໄວ້ແມ່ນຈະຖືກຕັກເຕືອນ, ຖ້າບໍ່ມີການແກ້ໄຂຢ່າງຮີບດ່ວນແມ່ນຈະຖືກສັ່ງໂຈະ ຫຼື ປັບໃໝ ແລະ ດຳເນີນການຕາມລະບຽບກົດໝາຍຂອງ ສ ປປ ລາວ;
3. ໃຫ້ນຳໃຊ້ຄຳແນະນຳສະບັບນີ້ ນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ ຈົນກວ່າຈະມີການປ່ຽນແປງ.

**ຮອງນາຍົກລັດຖະມົນຕີ, ລັດຖະມົນຕີກະຊວງການເງິນ,**

**ຫົວໜ້າສະເພາະກິດ**

[illegible]